**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ
ສຳນັກງານປົກຄອງແຂວງ

ເລກທີ 13.../ຈຂ,ຊຂ

ວັນທີ 23./ 11.../ 2015

# ຄຳສັ່ງແນະນຳ
ວ່າດ້ວຍ
## ການຄຸ້ມຄອງ ແລະ ປົກປັກຮັກສາສິ່ງແວດລ້ອມ

ເຖິງ : ບັນດາພະແນກການ, ກົມກອງ, ຫ້ອງການອ້ອມຂ້າງແຂວງ, ເມືອງ, ບໍລິສັດ, ການຈັດຕັ້ງບ້ານ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ພາຍໃນແຂວງຊຽງຂວາງ.

ເລື່ອງ : ການຄຸ້ມຄອງ ແລະ ປົກປັກຮັກສາສິ່ງແວດລ້ອມ ຢູ່ແຂວງຊຽງຂວາງ.

- ອີງຕາມ ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ທີ່ລະບຸໄວ້ໃນໝວດທີ 3, ມາດຕາ 14 ຂອງກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນແຫ່ງ ສປປລາວ;
- ອີງຕາມ ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ( ສະບັບປັບປຸງ ) ເລກທີ 29/ ສພຊ, ລົງວັນທີ 18 ທັນວາ 2012.

ແຂວງຊຽງຂວາງແມ່ນແຂວງໜຶ່ງທີ່ມີທ່າແຮງບົ່ມຊ້ອນທາງດ້ານຊັບພະຍາກອນທຳມະຊາດ ທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນປ່າໄມ້, ແຫຼ່ງນ້ຳ, ແຮ່ທາດ, ມີພູມສັນຖານທີ່ເປັນເອກະລັກ ແລະ ເປັນເງື່ອນໄຂພື້ນຖານໃນການເອື້ອອຳນວຍໃຫ້ແກ່ການພັດທະນາ ບໍ່ວ່າທາງດ້ານກະສິກຳ, ບໍ່ແຮ່, ພະລັງງານໄຟຟ້ານ້ຳຕົກ,.... ຄຽງຄູ່ການພັດທະນາດັ່ງກ່າວ ບາງໂຄງການປະຕິບັດການຄຸ້ມຄອງສິ່ງແວດລ້ອມໄດ້ດີ ແລະ ມີບາງໂຄງການຍັງເຮັດບໍ່ທັນໄດ້ ເຊິ່ງເປັນສາເຫດເຮັດໃຫ້ເກີດບັນຫາຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຕາມມາ.

ສະນັ້ນ, ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມຍືນຍົງ, ແນໃສ່ຮັບປະກັນໃຫ້ສິ່ງແວດລ້ອມມີຄຸນນະພາບດີ, ເຮັດໃຫ້ສິ່ງແວດລ້ອມຂຽວສະອາດ ແລະ ງາມຕາ, ປາສະຈາກມົນລະພິດ, ບໍ່ສົ່ງຜົນກະທົບອັນບໍ່ດີຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ ແລະ ລະບົບນິເວດວິທະຍາ.

**ເຈົ້າແຂວງ ແຂວງຊຽງຂວາງ ອອກຄຳສັ່ງແນະນຳດັ່ງນີ້ :**

1. ໃຫ້ພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດປະຊາຊົນ, ນັກຮຽນຮູ້, ນັກສຶກສາ ເປັນເຈົ້າການໃນການປ້ອງກັນ, ອະນຸລັກ, ບູລະນະ, ຟື້ນຟູສິ່ງແວດລ້ອມ, ຄວບຄຸມມົນລະພິດ ແລະ ໄພພິບັດທຳມະຊາດ ເຮັດໃຫ້ສິ່ງແວດລ້ອມຂຽວສະອາດ ແລະ ງາມຕາ, ປາສະຈາກມົນລະພິດ, ບໍ່ສົ່ງຜົນກະທົບອັນບໍ່ດີຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ ແລະ ລະບົບນິເວດ.

2. ບຸກຄົນ, ຄອບຄົວ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ຕ້ອງມີພັນທະປົກປັກຮັກສາສິ່ງແວດລ້ອມ ດ້ວຍການປ້ອງກັນ, ປັບປຸງ, ບູລະນະຟື້ນຟູ, ຄວບຄຸມ, ຕິດຕາມ ແລະ ກວດກາສິ່ງແວດລ້ອມ ບໍ່ສ້າງຜົນກະທົບ, ບໍ່ເຮັດໃຫ້ສິ່ງແວດລ້ອມເຊື່ອມໂຊມ, ບໍ່ສ້າງ ແລະ ປ່ອຍມົນລະພິດ ເກີນມາດຕະຖານຄວບຄຸມມົນລະພິດ ແລະ ມາດຕະຖານຄຸນນະພາບສິ່ງແວດລ້ອມແຫ່ງຊາດ ແນໃສ່ຮັບປະກັນໃຫ້ສິ່ງແວດລ້ອມມີຄຸນນະພາບດີ ແລະ ຮັບປະກັນການພັດທະນາແບບຍືນຍົງ.

3. ບຸກຄົນ, ຄອບຄົວ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ທີ່ກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຈາກການດຳເນີນກິດຈະການຂອງຕົນ ຕ້ອງໄດ້ຮັບຜິດຊອບໃນການແກ້ໄຂບັນຫາທັງໝົດທີ່ເກີດຂຶ້ນນັ້ນ ລວມທັງຮັບຜິດຊອບຕໍ່ງົບປະມານສິ້ນເປືອງຕ່າງໆທັງໝົດ ໃຫ້ພຽງພໍໃນການແກ້ໄຂບັນຫາດັ່ງກ່າວ.

4. ໃຫ້ບັນດາພະແນກການ, ກົມກອງ, ໂຮງຮຽນ, ໂຮງໝໍ ຕະຫຼອດຮອດແຕ່ລະຄອບຄົວ ຕ້ອງມີພັນທະຮັບຜິດຊອບໃຫ້ມີຖັງເກັບມ້ຽນຂີ້ເຫຍື້ອເປັນຂອງຕົນເອງ ເພື່ອບັນຈຸຂີ້ເຫຍື້ອຕາມສຳນັກງານອົງການ, ກິດຈະການຕ່າງໆ ແລະ ຄົວເຮືອນຂອງຕົນ ໂດຍນຳໃຊ້ລະບົບຫຼັກການ : ຫຼຸດຜ່ອນຂີ້ເຫຍື້ອ, ນຳໃຊ້ຄືນໃໝ່ ແລະ ຜະລິດຄືນໃໝ່.

5. ຫ້າມບໍ່ໃຫ້ຖິ້ມຂີ້ເຫຍື້ອຊະຊາຍຕາມສະຖານທີ່ສາທາລະນະ, ຖະໜົນຫົນທາງ, ສະຖານທີ່ທ່ອງທ່ຽວ ແລະ ອື່ນໆ, ໃຫ້ຖິ້ມຂີ້ເຫຍື້ອໃສ່ກະຕ່າຂີ້ເຫຍື້ອ ຫຼື ຕາມສະຖານທີ່ຖິ້ມຂີ້ເຫຍື້ອ ທີ່ທາງການກຳນົດໄວ້.
   - ຖ້າມີການລະເມີດ ແມ່ນມອບໃຫ້ອຳນາດການປົກຄອງບ້ານ : ກ່າວເຕືອນ, ປັບໃໝ ຕາມລະບຽບການຂອງບ້ານ.

6. ບັນດາໂຄງການ, ໂຮງງານ ແລະ ກິດຈະການຕ່າງໆ ຕ້ອງໄດ້ກວດກາຄຸນນະພາບສິ່ງແວດລ້ອມ ແລະ ຮັບໃບອະນຸຍາດໃຫ້ປ່ອຍມົນລະພິດ ຈາກພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງຊຽງຂວາງ ກ່ອນດຳເນີນໂຄງການ ແລະ ຕ້ອງມີຜົນການວິໄຈຄຸນນະພາບສິ່ງແວດລ້ອມ ທີ່ຖືກຕ້ອງຕາມມາດຕະຖານສິ່ງແວດລ້ອມແຫ່ງຊາດ ເພື່ອເປັນບ່ອນອີງໃນການພິຈາລະນາອອກໃບຢັ້ງຢືນດັ່ງກ່າວ ( ໃບຢັ້ງຢືນດັ່ງດ່າວກຳນົດ 5 ປີ ), ພ້ອມທັງການສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາການຄວບຄຸມມົນລະພິດ ເປັນແຕ່ລະໄລຍະ.

7. ບັນດາໂຮງຈັກ, ໂຮງງານ, ໂຄງການ ແລະ ກິດຈະການຕ່າງໆ ຕ້ອງນຳໃຊ້ເຕັກໂນໂລຊີສະອາດ ທີ່ແທດເໝາະກັບສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມ ແລະ ໃຫ້ມີຜົນກະທົບໜ້ອຍທີ່ສຸດຕໍ່ສິ່ງແວດລ້ອມ ບໍ່ເກີນມາດຕະຖານຄວບຄຸມມົນລະພິດແຫ່ງຊາດ ແລະ ປະຕິບັດໃຫ້ໄດ້ຕາມມາດຕະຖານເຕັກນິກ ຕາມຂະແໜງການທີ່ກ່ຽວຂ້ອງວາງອອກຢ່າງເຂັ້ມງວດ.

8. ທຸກໆໂຄງການລົງທຶນຂອງລັດ ແລະ ເອກະຊົນ ທີ່ສະເໜີຂໍລົງທຶນຢູ່ພາຍໃນແຂວງຊຽງຂວາງ ຕ້ອງຮັບຜິດຊອບຢ່າງເຕັມສ່ວນ ໃນການດຳເນີນການສຶກສາຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ, ຮັບປະກັນໃຫ້ໄດ້ຮັບໃບຢັ້ງຢືນສິ່ງແວດລ້ອມ ກ່ອນການລົງທຶນ.

9. ໃນການດຳເນີນຂະບວນການສຶກສາຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຕ້ອງແມ່ນບໍລິສັດທີ່ປຶກສາດ້ານສິ່ງແວດລ້ອມ ທີ່ມີໃບອະນຸຍາດດຳເນີນທຸລະກິດ ຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈຶ່ງສາມາດດຳເນີນຂະບວນການດັ່ງກ່າວໄດ້ ແຕ່ຕ້ອງໃຫ້ສອດຄ່ອງຕາມຄຳແນະນຳຂະບວນການສຶກສາເບື້ອງຕົ້ນກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 8029/ກຊສ, ລົງວັນທີ 17 ທັນວາ 2013 ຢ່າງເຂັ້ມງວດ.

10. ການດຳເນີນວຽກງານຂອງທຸກໆໂຄງການຕ້ອງຮັບປະກັນການມີສ່ວນຮ່ວມຂອງປະຊາຊົນ ແລະ ໃຫ້ມີການປຶກສາຫາລື ກັບອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ, ຜູ້ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມອື່ນໆ ທີ່ກ່ຽວຂ້ອງຕ້ອງໄດ້ປະຕິບັດຢ່າງຖືກຕ້ອງ ແລະ ເຂັ້ມງວດຕາມຄຳແນະນຳ ແລະ ບົດແນະນຳ ວ່າດ້ວຍ ການມີສ່ວນຮ່ວມຂອງມວນຊົນລວມທັງລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

11. ເຈົ້າຂອງໂຄງການ ຕ້ອງຮັບປະກັນການຈັດຕັ້ງປະຕິບັດມາດຕະການສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ໄດ້ກຳນົດໄວ້ໃນແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ພ້ອມທັງ

ຮັບຜິດຊອບຢ່າງເຕັມສ່ວນຕໍ່ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ເກີດຂຶ້ນຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆຂອງຕົນ ໄປຕະຫຼອດໄລຍະເວລາການກໍ່ສ້າງ ແລະ ການດຳເນີນໂຄງການ.

12. ທຸກໂຄງການພັດທະນາທີ່ໄດ້ຮັບໃບຢັ້ງຢືນສິ່ງແວດລ້ອມ ຈາກພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕ້ອງໄດ້ມອບງົບປະມານການຕິດຕາມກວດກາດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃຫ້ພຽງພໍ ແລະ ຄົບຖ້ວນ ຕາມທີ່ເຈົ້າຂອງໂຄງການໄດ້ກຳນົດໄວ້ໃນແຜນຄຸ້ມຄອງສິ່ງແວດລ້ອມ, ບົດລາຍງານການສຶກສາເບື້ອງຕົ້ນ ກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມ ທີ່ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງໄດ້ອອກໃບຢັ້ງຢືນຮັບຮອງເອົາແລ້ວນັ້ນ.
    - ຖ້າບໍລິສັດ, ໂຄງການ ແລະ ກິດຈະການ ບໍ່ປະຕິບັດຕາມເງື່ອນໄຂຂ້າງເທິງ ຕ້ອງຖືກຖອນໃບຢັ້ງຢືນສິ່ງແວດລ້ອມຂອງໂຄງການດັ່ງກ່າວ ໂດຍບໍ່ມີເງື່ອນໄຂ ຕາມກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ( ສະບັບປັບປຸງ ) ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012, ມາດຕາ 97.
13. ໃນກໍລະນີທີ່ເຈົ້າຂອງໂຄງການ ຕ້ອງການມອບເໝົາຕໍ່ໃຫ້ຜູ້ອື່ນ ດຳເນີນກິດຈະການໃດໜຶ່ງຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆຂອງຕົນ, ເຈົ້າຂອງໂຄງການຕ້ອງກຳນົດເນື້ອໃນ ແລະ ເງື່ອນໄຂລະອຽດ ກ່ຽວກັບ ມາດຕະການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ເຂົ້າໃນສັນຍາຮັບເໝົາຕໍ່ ເພື່ອໃຫ້ຜູ້ຮັບເໝົາຕໍ່ໄດ້ຈັດຕັ້ງປະຕິບັດຕາມມາດຕະການດັ່ງກ່າວຢ່າງຖືກຕ້ອງ ແລະ ຄົບຖ້ວນ, ແຕ່ເຈົ້າຂອງໂຄງການຍັງຕ້ອງໄດ້ມີຄວາມຮັບຜິດຊອບຢ່າງເຕັມສ່ວນສຳລັບການດຳເນີນການ ຫຼື ການປ່ອຍປະລະເລີຍ ຕໍ່ການປະຕິບັດກິດຈະການໃດໜຶ່ງຂອງຜູ້ຮັບເໝົາຕໍ່ ທີ່ເປັນສາຍເຫດເຮັດໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ.
14. ໃນກໍລະນີທີ່ຜູ້ພັດທະນາໂຄງການຕ່າງໆ ບໍ່ໄດ້ກຳນົດບັນດາມາດຕະການໃນການຫຼຸດຜ່ອນ ຫຼື ແກ້ໄຂຜົນກະທົບຢ່າງພຽງພໍ ແລະ ຖືກຕ້ອງ ກັບສະພາບຄວາມເປັນຈິງ ຫຼື ບໍ່ສາມາດປະຕິບັດໄດ້ຕາມຈຸດປະສົງທີ່ກຳນົດໄວ້ ແມ່ນຕ້ອງໄດ້ສ້າງແຜນຄຸ້ມຄອງສິ່ງແວດລ້ອມນັ້ນຄືນໃຫ້ຖືກຕ້ອງ ແລະ ຄົບຖ້ວນ ເພື່ອໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ພິລະນາຮັບຮອງຄືນໃໝ່.
15. ເຈົ້າຂອງໂຄງການທີ່ມີຈຸດປະສົງຈະມອບໂອນກຳມະສິດໂຄງການລົງທຶນ ແລະ ກິດຈະກຳຕ່າງໆຂອງຕົນໃຫ້ຜູ້ອື່ນໆ ຕ້ອງໄດ້ຮັບອະນຸຍາດຈາກລັດສາກ່ອນ ແລະ ຕ້ອງກຳນົດຢ່າງຈະແຈ້ງ ເພື່ອປະກອບໃສ່ໃນສັນຍາມອບໂອນກຳມະສິດ ກ່ຽວກັບ ມາດຕະການສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ ທີ່ໄດ້ລະບຸໄວ້ໃນແຜນການຄຸ້ມຄອງ ແລະ ຕິດຕາມສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ໄດ້ຜ່ານການຮັບຮອງເອົາໄປແລ້ວນັ້ນ ໃຫ້ເຈົ້າຂອງໂຄງການໃໝ່ ສືບຕໍ່ນຳໄປຈັດຕັ້ງປະຕິບັດຈົນສຳເລັດຕາມແຜນການກຳນົດໄວ້.
16. ໄລຍະ 6 ເດືອນກ່ອນສິ້ນສຸດໂຄງການ, ເຈົ້າຂອງໂຄງການຕ້ອງສະເໜີຫາພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເພື່ອກວດກາ ແລະ ປະເມີນການຈັດຕັ້ງປະຕິບັດມາດຕະການສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຂອງໂຄງການ, ໃນກໍລະນີໄດ້ຈັດຕັ້ງປະຕິບັດທຸກມາດຕະການ ແລະ ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຄົງຄ້າງ ຈຶ່ງເຫັນດີໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ອອກໜັງສືຢັ້ງຢືນຜົນສຳເລັດການປະຕິບັດດ້ານສິ່ງແວດລ້ອມ ໃຫ້ແກ່ເຈົ້າຂອງໂຄງການ ແລະ ກົງກັນຂ້າມ ຖ້າຫາກມີບັນຫາຄົງຄ້າງ ເຈົ້າຂອງໂຄງການຕ້ອງສືບຕໍ່ແກ້ໄຂບັນຫາຄົງຄ້າງເຫຼົ່ານັ້ນ ໃຫ້ສຳເລັດເສຍກ່ອນ ແລະ ໄດ້ຮັບການຮັບຮອງຈາກ ພຊສ ແຂວງ ຈຶ່ງຖືວ່າເຈົ້າຂອງໂຄງການໄດ້ສິ້ນສຸດພັນທະໃນການຈັດຕັ້ງປະຕິບັດມາດຕະການສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຂອງໂຄງການ.
17. ໃນກໍລະນີເຈົ້າຂອງໂຄງການຕ້ອງການຂະຫຍາຍໂຄງການລົງທຶນ ແລະ ກິດຈະກຳຕ່າງໆ ບໍ່ວ່າໃນລັກສະນະຂອງການດຳເນີນໂຄງການໃນບ່ອນໃໝ່ເຊັ່ນການສ້າງຕັ້ງບ່ອນດຳເນີນທຸລະກິດໃນບ່ອນໃໝ່ ຫຼື ການຂະຫຍາຍພື້ນທີ່ ແລະ ຂະໜາດຂອງການລົງທຶນໃນກິດຈະການຕ່າງໆ, ເຈົ້າຂອງໂຄງການດັ່ງກ່າວຕ້ອງໄດ້ດຳເນີນຂະບວນການ

ສຶກສາເບື້ອງຕົ້ນ ກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມ ໃຫ້ສອດຄ່ອງກັບຄໍາແນະນໍາ ແລະ ຕ້ອງໄດ້ຮັບໃບຢັ້ງຢືນກ່ຽວກັບ ສິ່ງແວດລ້ອມເສຍກ່ອນ ຈຶ່ງສາມາດດໍາເນີນການຂະຫຍາຍຂອງການລົງທຶນ ແລະ ກິດຈະກໍາຕ່າງໆ ດັ່ງກ່າວນັ້ນໄດ້.

18. ບັນດາບໍລິສັດທີ່ໄດ້ຮັບອະນຸຍາດຊອກຄົ້ນ-ສໍາຫຼວດແຮ່ທາດ ຢູ່ແຂວງຊຽງຂວາງ ຕ້ອງໄດ້ສ້າງແຜນຄຸ້ມຄອງ ແລະ ຕິດຕາມກວດກາດ້ານສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ, ສະເໜີໃຫ້ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງຊຽງຂວາງ ພິຈາລະນາຮັບຮອງ ກ່ອນລົງມືຈັດຕັ້ງປະຕິບັດໂຄງການ, ທັງນີ້ກໍ່ເພື່ອເປັນການສ້າງຄວາມສະດວກໃຫ້ແກ່ການດໍາເນີນວຽກງານ.

19. ທຸກໆໂຄງການ ແລະ ກິດຈະການຕ່າງໆ ທີ່ໄດ້ຮັບອະນຸຍາດການລົງທຶນຢ່າງຖືກຕ້ອງ ແລະ ກໍາລັງດໍາເນີນຢູ່ແຂວງຊຽງຂວາງ ທີ່ຍັງບໍ່ທັນມີໃບຢັ້ງຢືນສິ່ງແວດລ້ອມ ຕ້ອງໄດ້ສຶກສາ ແລະ ສ້າງແຜນຄຸ້ມຄອງ, ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດຄືນໃໝ່ ໃຫ້ສໍາເລັດພາຍໃນ 60 ວັນ ໂດຍພົວພັນເອົາແບບຟອມ ໃນການສຶກສາ ແລະ ສ້າງແຜນຄຸ້ມຄອງສິ່ງແວດລ້ອມ, ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ນໍາພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງຊຽງຂວາງ, ແຕ່ຖ້າຫາກບໍ່ສໍາເລັດຕາມວັນເວລາທີ່ກໍານົດໄວ້ ເຈົ້າຂອງໂຄງການນັ້ນຈະຖືກປະຕິບັດມາດຕະການຕ່າງໆ ທີ່ກໍານົດໄວ້ໃນມາດຕາ 92,93,94,95, 96 ແລະ 97 ຂອງກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ( ສະບັບປັບປຸງ ) ເລກທີ 29/ ສພຊ, ລົງວັນທີ 18 ທັນວາ 2012.

20. ມອບໃຫ້ບັນດາພະແນກການ, ກົມກອງ, ບໍລິສັດ, ລັດວິສາຫະກິດ, ບັນດາເມືອງ, ກຸ່ມບ້ານ ແລະ ບັນດາບ້ານ ຈົ່ງພ້ອມກັນຈັດຕັ້ງປະຕິບັດ ແລະ ເຜີຍແຜ່ ຄໍາສັ່ງແນະນໍາສະບັບນີ້ໃຫ້ທົ່ວເຖິງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

21. ມອບໃຫ້ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງ ສົມທົບກັບຂະແໜງການທີ່ກ່ຽວຂ້ອງຂອງແຂວງ ແລະ ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງຂອງເມືອງ ເປັນເຈົ້າການໃນການກວດກາການຈັດຕັ້ງປະຕິບັດຄໍາສັ່ງແນະນໍາສະບັບນີ້ຢ່າງເຂັ້ມງວດ.

ດັ່ງນັ້ນ, ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ພ້ອມກັນຈັດຕັ້ງປະຕິບັດຄໍາສັ່ງແນະນໍາສະບັບນີ້ຢ່າງເຂັ້ມງວດ ນັບແຕ່ມື້ລົງລາຍເຊັນນີ້ເປັນຕົ້ນໄປ.

ຮອງເຈົ້າແຂວງ ແຂວງຊຽງຂວາງ

ບົວສອນ ສີບວນທອງ